Special Economic Zone, Lecture eleventh, Establishment of SEZ all over Laos

## 1. ສະພາບໂດຍລວມກ່ຽວກັບ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ສປປ ລາວ ຕັ້ງຢູ່ທິດຕາເວັນອອກສ່ຽງໃຕ້ຂອງທະວີບອາຊີ, ຢູ່ໃຈກາງຂອງແຫຼມອິນດູຈີນ. ສປປ ລາວ ມີເນື້ອທີ່ທັງໝົດ 236.800 ຕາລາງກິໂລແມັດ ເປັນປະເທດທີ່ບໍ່ມີທາງອອກສູ່ທະເລ, ມີຊາຍແດນຕິດກັບ ປະເທດ ຈີນ, ທິດໃຕ້ຕິດກັບປະເທດກຳປູເຈຍ, ທິດຕາເວັນອອກຕິດກັບປະເທດຫວຽດນາມ, ທິດຕາເວັນຕົກຕິດກັບປະເທດໄທ ແລະ ທິດຕາເວັນຕົກສ່ຽງເໜືອຕິດກັບປະເທດມຽນມາ, ຊຶ່ງ ສປປ ລາວ ເປັນປະເທດດຽວໃນພາກພື້ນນີ້ທີ່ບໍ່ມີຊາຍແດນຕິດກັບທະເລ.

ສປປ ລາວ ຕັ້ງຢູ່ ອາຊີຕາເວັນອອກສ່ຽງໃຕ້ ຊຶ່ງເປັນເຂດທີ່ມີການເຕີບໂຕທາງດ້ານເສດຖະກິດທີ່ໄວທີ່ສຸດເຂດໜຶ່ງໃນໂລກ, ຊຶ່ງ ສປປ ລາວ ມີອັດຕາການຂະຫຍາຍຕົວທາງດ້ານເສດຖະກິດສະເລ່ຍເຖິງ 7% - 8% ຕໍ່ປີ ໃນທົດສະວັດທີ່ຜ່ານ ແລະ ເປັນປະເທດທີ່ມີສະຖຽນລະພາບທາງດ້ານການເມືອງ. ໃນຕົ້ນປີ 2013, ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງອົງການຄ້າໂລກ (WTO) ແລະ ເຂົ້າເປັນສະມາຄົມເສດຖະກິດອາຊຽນ (AEC) ໃນປີ 2015 ຊຶ່ງເປັນເງື່ອນໄຂອັນດີ ໃນການເຊື່ອມຕໍ່ກັບຕ່ອງໂສ້ການຜະລິດ ແລະ ການບໍລິການ ຂອງຂົງເຂດອາຊຽນ ທີ່ຈະກາຍເປັນຖານການຜະລິດດຽວ ແລະ ຕະຫຼາດດຽວ.

ນອກຈາກນີ້ ສປປ ລາວ ຍັງໄດ້ຮັບສິດທິພິເສດທາງດ້ານການຄ້າກັບ 42 ປະເທດທົ່ວໂລກ, ລວມທັງ ສະຫະພາບເອີຣົບ (EU) ຊຶ່ງເຮັດໃຫ້ຜະລິດຕະພັນທີ່ສົ່ງອອກຈາກປະເທດ ສາມາດເຂົ້າສູ່ຕະຫຼາດໂລກໃນອັດຕາພາສີທີ່ຕໍ່າ ແລະ ໃນບາງກໍລະນີກໍ່ໄດ້ຮັບການຍົກເວັ້ນ, ພ້ອມນັ້ນກໍ່ໄດ້ມີສາຍພົວພັນທາງດ້ານການຄ້າແບບປົກກະຕິ.

ສປປ ລາວ ເປັນປະເທດທີ່ມີທ່າແຮງທາງດ້ານຊັບພະຍາກອນທຳມະຊາດ, ໂດຍສະເພາະແມ່ນຂະແໜງການພະລັງງານສະອາດ, ນອກຈາກນັ້ນ ກໍ່ຍັງມີຊັບພະຍາກອນທຳມະຊາດອື່ນໆ ທີ່ອຸດົມສົມບູນ ແລະ ພ້ອມທີ່ຈະສະໜອງໃຫ້ກັບການຜະລິດ ແລະ ການປຸງແຕ່ງພາຍໃນປະເທດ ເຊິ່ງຈະຊ່ວຍຫຼຸດຜ່ອນໄລຍະເວລາ ແລະ ຄ່າໃຊ້ຈ່າຍໃນການນຳເຂົ້າວັດຖຸດິບ

ລັດຖະບານ ຕົກລົງສ້າງຕັ້ງເຂດເສດຖະກິດພິເສດ ຕາມການຄົ້ນຄວ້າສະເໜີຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງ ທຶນຂັ້ນສູນກາງ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ. ພາຍຫຼັງລັດຖະບານຕົກລົງສ້າງເປັນເຂດເສດຖະກິດພິເສດແລ້ວ ຈຶ່ງກຳນົດຮູບການລົງທຶນ ແລະ ຄັດເລືອກຜູ້ພັດທະນາເຂດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງດຳລັດ ວ່າດ້ວຍເຂດເສດຖະກິດພິເສດ.

## 2. ປະຫວັດຄວາມເປັນມາຂອງການພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດຢູ່ ສປປ ລາວ

ການພັດທະນາ ເຂດເສດຖະກິດພິເສດ (ຂພສ) ຢູ່ ສປປ ລາວ ແມ່ນຮູບແບບຫນຶ່ງ ຂອງການພັດທະນາເສດຖະກິດ ຕາມແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ທີ່ກຳນົດໄວ້ໃນແຕ່ລະໄລຍະ. ການພັດທະນາ ຂພສ ຢູ່ ສປປ ລາວ ມີຄຸນລັກສະນະ ແລະ ຈຸດພິເສດທີ່ແຕກຕ່າງກັບການພັດທະນາ ແລະ ຄຸ້ມຄອງ ຂພສ ຢູ່ບັນດາປະເທດອື່ນໆ ເນື່ອງຈາກວ່າປະເທດເຮົາບໍ່ມີຊາຍແດນຕິດຈອດກັບທະເລ ແລະ ງົບປະມານໃນການພັດທະນາພື້ນຖານໂຄງລ່າງ ເພື່ອຮອງຮັບການລົງທຶນມີຈຳນວນຈຳກັດ.

ດັ່ງນັ້ນ, ລັດຖະບານ ຈຶ່ງໄດ້ສົ່ງເສີມໃຫ້ຜູ້ພັດທະນາເອກກະຊົນທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນ ໂດຍໃຫ້ນະໂຍບາຍສົ່ງເສີມພິເສດ ທີ່ແຕກຕ່າງກັບການລົງທຶນທົ່ວໄປ, ອຳນວຍຄວາມສະດວກໃນການລົງທຶນ ແລະ ການດຳເນີນທຸລະກິດ ໃຫ້ມີຄວາມສະ ດວກ, ວ່ອງໄວ, ໂປ່ງໃສ ແລະ ກວດສອບໄດ້. ການພັດທະນາ ແລະ ຄຸ້ມຄອງ ຂພສ ຢູ່ປະເທດເຮົາ ໃນໄລຍະຜ່ານມາ ສາມາດແບ່ງອອກເປັນ 3 ໄລຍະຄື:

**ໄລຍະທີ 1** :

ນັບແຕ່ປີ 2003 ຫາ 2010 ລັດຖະບານ ໄດ້ສ້າງຕັ້ງເຂດເສດຖະກິດພິເສດ ສະຫວັນ-ເຊໂນ ຂຶ້ນເປັນແຫ່ງທຳອິດ ເພື່ອດຶງດູດການລົງທຶນ ແລະ ສ້າງໃຫ້ເປັນເຂດອຸດສາຫະກຳ, ການຄ້າ, ການບໍລິການ ຈົນຮອດປີ 2010 ລັດຖະບານ ຈຶ່ງໄດ້ພິຈາລະນາຍົກລະດັບໂຄງ ການລົງທຶນທົ່ວໄປຈຳນວນຫນຶ່ງ ຂຶ້ນເປັນ ຂພສ ໂດຍແມ່ນຂະແໜງການທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ເປັນຜູ້ບໍລິຫານ ແລະ ຄຸ້ມຄອງ ເຊັ່ນ: ເຂດເສດຖະກິດພິເສດສະຫວັນ-ເຊໂນ ຂຶ້ນກັບສຳນັກງານນາຍົກລັດຖະມົນຕີ, ເຂດເສດຖະກິດພິເສດ ສາມຫລ່ຽມຄຳ ແລະ ເຂດເສດຖະກິດສະເພາະ ບໍ່ເຕ່ນແດນຄຳ ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ສ່ວນເຂດນິຄົມອຸດສາຫະກຳການຄ້າວຽງຈັນ-ໂນນທອງ ຂຶ້ນກັບກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງແຕ່ລະເຂດມີດຳລັດສະເພາະ ແລະ ນະໂຍບາຍສົ່ງເສີມທີ່ແຕກຕ່າງກັນ. ຜ່ານການຈັດຕັ້ງປະຕິບັດ ເຫັນວ່າການພັດທະນາ ແລະ ຄຸ້ມຄອງ ຂພສ ໃນໄລຍະນັ້ນ ຍັງພົບຫຼາຍບັນຫາທີ່ຫຍຸ້ງຍາກ ແລະ ບໍ່ທັນສາມາດດຶງດູດການລົງທຶນໄດ້ດີເທົ່າທີ່ຄວນ ເພາະການອະນຸມັດການລົງທຶນ ແລະ ດຳເນີນທຸລະກິດ ຍັງປະຕິບັດຕາມກົນໄກການລົງທຶນແບບທົ່ວໄປ ແລະ ຜ່ານຫລາຍຂັ້ນຫລາຍຂອດ.

**ໄລຍະທີ 2** :

ນັບແຕ່ປີ 2010–2016 ລັດຖະບານ ໄດ້ສ້າງຕັ້ງຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງ ຂພສ ຕາມດຳລັດ ສະບັບເລກທີ 517/ ນຍ ລົງວັນທີ 9/12/2010 ເພື່ອເປັນເສນາທິການໃຫ້ແກ່ລັດຖະບານ ໃນການຊີ້ນຳ-ນຳພາວຽກງານການພັດທະນາ ແລະ ຄຸ້ມຄອງ ຂພສ ໃນຂອບເຂດທົ່ວປະເທດ ແລະ ໄດ້ສ້າງຕັ້ງກອງເລຂາ ຄຂພສ ເພື່ອເປັນເສນາທິການ ໃຫ້ແກ່ຄະນະກຳມະການດັ່ງກ່າວ ໂດຍມີໂຄງປະກອບການຈັດຕັ້ງສັງກັດຢູ່ຫ້ອງວ່າການລັດຖະບານ. ການພັດທະນາ ແລະ ຄຸ້ມຄອງ ຂພສ ໃນໄລຍະນີ້ ໄດ້ສຸມໃສ່ປັບປຸງແກ້ໄຂບັນດາຂໍ້ຄົງຄ້າງຕ່າງໆ ໂດຍສະເພາະດ້ານນິຕິກຳ, ນະໂຍບາຍສົ່ງເສີມການລົງທຶນ, ສ້າງແຜນຍຸດທະສາດການພັດທະນາ ແລະ ຄຸ້ມຄອງ ຂພສ ແຕ່ປີ 2011 ຫາປີ 2020, ກົນໄກການບໍລິຫານຄຸ້ມຄອງດ້ານມະຫາພາກ,ຈຸລະພາກ, ການບໍລິການຜ່ານປະຕູດຽວ , ປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຢູ່ ຂພສ ແຕ່ລະເຂດ ຊຶ່ງເຮັດໃຫ້ການພັດທະນາ ຂພສ ໃນໄລຍະນີ້ໄດ້ສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນທັງພາຍໃນ ແລະຕ່າງປະເທດນັບມື້ນັບຫລາຍຂຶ້ນ.

**ໄລຍະທີ 3**

ນັບແຕ່ເດືອນ ເມສາ 2016 ເຖິງປະຈຸບັນວຽກງານການພັດທະນາ ແລະ ຄຸ້ມຄອງ ຂພສ ໄດ້ຖືກຊັບຊ້ອນກົງຈັກການຈັດຕັ້ງຈາກຫ້ອງວ່າການລັດຖະບານ (ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ) ມາສັງກັດຢູ່ ກະຊວງແຜນການ ແລະ ການລົງທຶນ ຊຶ່ງໃນໄລຍະນີ້ໄດ້ສຸມໃສ່ການດຶງດູດການລົງທຶນ, ແກ້ໄຂບັນຫາຕ່າງໆ ຂອງບັນດາຂພສ, ປັບປຸງກົງຈັກການຈັດຕັ້ງ,ກຳນົດພາລະບົດບາດການຄຸ້ມຄອງ ຂພສ ຢູ່ມະຫາພາກ-ຈຸລະພາກ ແລະ ອອກດຳລັດວ່າດ້ວຍ ເຂດເສດຖະກິດພິເສດ ສະບັບປັບປຸງ.

ເຂດເສດຖະກິດພິເສດ ແມ່ນຫນຶ່ງໃນຂະແໜງການພັດທະນາເສດຖະກິດ ເພື່ອສົ່ງເສີມ ແລະ ດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງເພື່ອສ້າງເຂດອຸດສາຫະກຳ ແລະ ຕົວເມືອງໃໝ່ ແນ່ໃສ່ສົ່ງເສີມການສ້າງວຽກເຮັດງານທຳໃຫ້ກັບປະຊາຊົນລາວບັນດາເຜົ່າ, ຖ່າຍທອດຄວາມຮູ້ທາງດ້ານເຕັກໂນໂລຍີ ທີ່ທັນສະໄໝ, ປະກອບສ່ວນດ້ານລາຍຮັບເຂົ້າງົບປະມານຂອງລັດ ເພື່ອເຮັດໃຫ້ຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ ໃນປີ 2020 ແລະ ນຳໄປສູ່ປະເທດທີ່ມີຄວາມຈະເລີນຮຸ່ງເຮືອງ. ປະຈຸບັນ ສປປ ລາວ ໄດ້ມີເຂດເສດຖະກິດພິເສດ ທັງໝົດ 12 ເຂດ ໂດຍແບ່ງອອກເປັນ ເຂດອຸດສາຫະກຳ, ເຂດການຄ້າ ແລະ ສູນກາງ ການຂົນສົ່ງ, ເຂດການທ່ອງທ່ຽວ ແລະ ຕົວເມືອງໃໝ່. ຊຶ່ງປະກອບມີຄື:

| ລ/ດ | ຊື່ ຂອງເຂດເສດຖະກິດ | ທີ່ຕັ້ງ | ເນື້ອທີ່ດິນ (ເຮັກຕາ) | ອາຍຸສຳປະທານ (ປີ) | ຜູ້ພັດທະນາ |
|---|---|---|---|---|---|
| 1. | ເຂດນິຄົມອຸດສະຫະກຳ ແລະ ການຄ້າ ວຽງຈັນ -ໂນນທອງ | ນະຄອນຫຼວງ | 1000 | 50 | ລັດຖະບານລາວ + ເອກະຊົນ (ໃຕ້ຫ້ວນ |
| 2. | ເຂດກວມລວມ ໄຊເສດຖາ | ນະຄອນຫຼວງ ວຽງຈັນ | 1,000 | 75 | ລັດຖະບານລາວ+ ເອກະຊົນຈີນ |
| 3. | ເຂດເສດຖະກິດພິເສດ ສະຫວັນ-ເຊໂນ | ແຂວງ ສະຫວັນ ນະເຂດ | 1010 | 75 | ລັດຖະບານລາວ |
| 4. | ເຂດເສດຖະກິດສະເພາະ ພູຂຽວ | ແຂວງຄຳມ່ວນ | 4850 | 99 | ເອກະຊົນລາວ |
| 5. | ເຂດເສດຖະກິດພິເສດ ຈຳປາສັກ | ແຂວງຈຳປາສັກ | 10,841 | 50 | ເອກະຊົນລາວ |
| 6. | ເຂດເສດຖະກິດສະເພາະ ບໍ່ເຕນ | ແຂວງຫຼວງນ້ຳທ | 1640 | 50 | ເອກະຊົນຈີນ |
| 7. | ເຂດເສດຖະກິດສະເພາະ ດົງໂພສີ | ນະຄອນຫຼວງ ວຽງຈັນ | 54 | 50 | ລັດຖະບານລາວ + ເອກະຊົນມະເລເຊຍ |
| 8. | ເຂດເສດຖະຖິດ ສະເພາະ ທ່າແຂກ | ແຂວງຄຳມ່ວນ | 1035 | 75 | ລັດຖະບານລາວ |
| 9. | ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ | ແຂວງ ບໍ່ແກ້ວ | 3000 | 99 | ລັດຖະບານລາວ + ເອກະຊົນຈີນ |
| 10. | ເຂດເສດຖະກິດພິເສດ ແຂວງຫຼວງພະບາງ | ແຂວງຫຼວງພະ ບາງ | 4850 | 99 | ເອກະຊົນລາວ |
| 11. | ເຂດເສດຖະກິດພິເສດ ບຶງທາດຫຼວງ | ນະຄອນຫຼວງ ວຽງຈັນ | 365 | 99 | ເອກະຊົນຈີນ |
| 12. | ເຂດເສດຖະກິດສະເພາະ ລ່ອງແທ່ງ ວຽງຈັນ | ນະຄອນຫຼວງ ວຽງຈັນ | 588 | 99 | ເອກະຊົນຫວຽດ |

ສຳລັບການສະເໜີ ຂໍພັດທະນາເຂດເສດຖະກິດພິເສດ ເພື່ອດຳເນີນກິດຈະການ ຫຼື ຂະແໜງການອື່ນ ທີ່ບໍ່ໄດ້ກຳນົດໄວ້ໃນມາດຕາ 02 ຂອງດຳລັດສະບັບ ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016. ຊຶ່ງເຫັນວ່າມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ - ສັງຄົມ ລັດຖະບານ ຈະໄດ້ລາຍງານສະພາແຫ່ງຊາດພິຈາລະນາຕົກລົງ. ຜູ້ທີ່ມີຈຸດປະສົງລົງທຶນພັດທະນາເຂດເສດຖະກິດພິເສດຕາມການກຳນົດຂອງລັດຖະບານຕ້ອງຍື່ນຄຳຮ້ອງພ້ອມດ້ວຍເອກະສານປະກອບຕໍ່ຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງ. ໃນກໍລະນີມີຜູ້ສະເໜີຂໍພັດທະ ນາເຂດເສດຖະກິດພິເສດແຫ່ງດຽວແຕ່ສອງຄົນຂຶ້ນໄປຕ້ອງຜ່ານການຄັດເລືອກຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ຊຶ່ງບາງເຂດເສດຖະກິດພິເສດທີໄດ້ຮັບການສ້າງຕັ້ງຂຶ້ນໃສ ສປປ ລາວ ປະກອບມີ ຄື:

## ເຂດເສດຖະກິດພິເສດ ສະຫວັນເຊໂນ (Savan-Seno Special Economic Zone)

ເຂດເສດຖະກິດພິເສດສະຫວັນ - ເຊໂນ (ຂສສຊ) ເປັນ ຂພສ ແຫ່ງທຳອິດ ທີ່ຖືກສ້າງຂຶ້ນ ຕາມລຳດັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148) ນຍ ລົງວັນທີ 29 ກັນຍາ 2003. ຂສສຊ ມີເນື້ອທີ່ທັງໝົດ 677 ເຮັກຕາແບ່ງອອກເປັນ 4 ເຂດ, ຕັ້ງຢູ່ສົ້ນຂົວມິດຕະພາບແຫ່ງທີ 2 ແລະ ລຽບຕາມເສັ້ນທາງເລກທີ 9 ແຂວງສະຫວັນນະເຂດ. ຈຸດປະສົງຕົ້ນຕໍຂອງການສ້າງ ຂສສຊ ແມ່ນເພື່ອສົ່ງເສີມການລົງທຶນ ໃນຂະແໜງການຜະລິດ, ການຄ້າ ແລະການບໍລິການ ຕາມແລວເສັ້ນທາງເສດຖະກິດ ຕາເວັນອອກ-ຕາເວັນຕົກ (EWEC) ບົນພື້ນຖານ ການຄຸ້ມຄອງດ້ວຍດຳລັດສະເພາະ ຂອງເຂດຕາມກົນໄກເສດຖະກິດຕະຫຼາດ ພາຍໃຕ້ການບໍລິຫານ ແລະ ຄຸ້ມຄອງຂອງລັດ. ຊຶ່ງນປັດຈຸບັນ ໄດ້ສຳເລັດການພັດທະນາພື້ນຖານໂຄງລ່າງຈຳນວນໜຶ່ງ ເປັນຕົ້ນແມ່ນຢູ່ ເຂດຈຸດ C ແລະ ຕິດຕັ້ງລະບົບສາທາລະນຸປະໂພກ ເຊັ່ນ: ໄຟຟ້າ, ນ້ຳປະປາ, ແລະ ເສັ້ນທາງຢູ່ໃນເຂດ.

## ເຂດເສດຖະກິດສະເພາະບໍ່ເຕນແດນງາມ

ເຂດເສດຖະກິດສະເພາະ ບໍ່ເຕ່ນແດນງາມ (ຂສພບ) ລິເລີ່ມມາຈາກການສ້າງເປັນເຂດການຄ້າຊາຍແດນ ແລະເຄື່ອນໄຫວຕາມດຳລັດ 162/ນຍ. ຈົນມາເຖິງວັນທີ 9 ທັນວາ 2003, ບໍລິສັດ ຟອກຮົ່ງ ອຸດສະຫະກຳ ຈຳກັດ ຈຶ່ງຂໍແລະ ໄດ້ຮັບສຳປະທານເນື້ອທີ່ດິນ 1640 ເຮັກຕາ ກັບລັດຖະບານ ເພື່ອພັດທະນາເຂດ ດັ່ງກ່າວ ໃຫ້ເປັນສູນກາງການຄ້າ, ການລົງທຶນ ແລະ ແຫຼ່ງບັນເທີງຄົບວົງຈອນ ຊຶ່ງຈະນຳໃຊ້ທຶນທັງໝົດ 103 ລ້ານ ໂດລາສະຫະລັດ. ໃນເດືອນ 2 ປີ 2010 ລັດຖະບານກໍໄດ້ສ້າງເຂດດັ່ງກ່າວ ເປັນເຂດເສດຖະກິດພິເສດ ໂດຍບໍລິສັດ ຟອກຮົ່ງ ອຸດສະຫະກຳ ຈຳກັດເປັນຜູ້ພັດທະນາ[1].

ເປັນ ຂພສ ທີ່ຕັ້ງຢູ່ເສັ້ນທາງ R3 ທາງພາກເໜືອ ແຂວງຫຼວງນ້ຳທາ ແລະ ມີທາງອອກສູ່ຊາຍແດນ ລາວ-ຈີນ ຢູ່ທີ່ ເຂດບໍ່ຫານຂອງແຂວງຢູນນານ, ເຂດດັ່ງກ່າວມີຈຸດປະສົງສ້າງເປັນເຂດທ່ອງທ່ຽວທາງວັດທະນາທຳລວມທັງເປັນສູນກາງການຄ້າ ແລະ ການຂົນສົ່ງທີ່ທັນສະໄໝ ຂອງທາງພາກເໜືອຂອງປະເທດລາວ. ຂພສ ບໍ່ເຕ່ນ ຖືວ່າເປັນປະຕູສູ່

---

[1] ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢູ່ ສປປລາວ ແຕ່ປີ 20211 ຮອດປີ 2020, ໜ້າທີ 8

ອາຊຽນໄປຍັງສປ ຈີນ, ນອກຈາກນັ້ນ ຍັງໄດ້ເປັນເຂດຮ່ວມມືທາງດ້ານການພັດທະນາເສດຖະກິດ ລະຫວ່າງ ສປປ ລາວ ແລະ ສປ ຈີນ.

ມາຮອດປະຈຸບັນ ເຂດເສດຖະກິດສະເພາະ ບໍ່ເຕ່ນແດນງາມ ສາມາດດຶງດູດການລົງທຶນ ໄດ້ທັງໝົດ 94 ບໍລິສັດ, ມູນຄ່າການລົງທຶນຕົວຈິງ 904.211.706 ໂດລາສະຫະລັດ. ໃນນັ້ນ, ລັດຖະບານ 4.211.706 ໂດລາສະຫະລັດ, ຜູ້ພັດທະນາ 900.000.000 ໂດລາສະຫະລັດ; ປະຕິບັດພັນທະຕາມສັນຍາສໍາປະທານ 1.066.453 ໂດລາສະຫະລັດ, ສາມາດສ້າງວຽກເຮັດງານທໍາໄດ້ທັງໝົດ 3.136 ຄົນ. ໃນນັ້ນ, ແຮງງານຕ່າງປະເທດ 2.613 ຄົນ ແລະ ແຮງງານລາວ 523 ຄົນ, ນໍາເຂົ້າວັດຖຸດິບ, ເຄື່ອງກົນຈັກ ແລະ ອຸປະກອນ ເພື່ອມາຮັບໃຊ້ການຜະລິດ ແລະ ກໍ່ສ້າງພື້ນຖານໂຄງລ່າງ ມູນຄ່າທັງໝົດ 30.787.491 ໂດລາສະຫະລັດ.

**ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ (Golden Triangle Special Economic Zone) ຫຼື ຂສພຄ.**

ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ສ້າງຕັ້ງຂຶ້ນໃນປີ 2007 ໂດຍລັດຖະບານລາວໄດ້ເຊັນສັນຍາການພັດທະນາກັບ ບໍລິສັດ ດອກງິ້ວຄໍາ (ຮ່ອງກົງ)ສາກົນ ຈໍາກັດ ເພື່ອຮ່ວມກັນວາງແຜນ ແລະ ສ້າງ "ເຂດທ່ອງທ່ຽວເສດຖະກິດອາຊຽນສາມຫລ່ຽມຄໍາ" ເຊິ່ງມີຂໍ້ມູນດັ່ງລຸ່ມນີ້:

ນັບຕັ້ງແຕ່ການສ້າງຕັ້ງເຂດເສດຖະກິດພິເສດສາມຫລ່ຽມຄໍາ, ໄດ້ສ້າງຍຸດທະສາດການພັດທະນາ "ເຂດທ່ອງທ່ຽວ". ໃນຂະນະທີ່ພວມສືບຕໍ່ຮັກສາ ແລະ ສົ່ງເສີມວັດທະນະທໍາຂອງລາວ, ພວກເຮົາໄດ້ຄົ້ນພົບວັດທະນະທໍາທາງປະຫວັດສາດ ແລະ  ໄດ້ນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ແຫຼ່ງທ່ອງທ່ຽວທີ່ອ້ອມຮອບ, ສືບຕໍ່ປັບປຸງກໍ່ສ້າງພື້ນຖານໂຄງລ່າງໃນຕົວເມືອງ ແລະ ພັດທະນາການທ່ອງທ່ຽວແບບທໍາມະຊາດ, ການພັກຜ່ອນ, ການບັນເທີງ ແລະ ການຜະລິດຢ່າງເຂັ້ມແຂງ, ສົ່ງເສີມການກະສິກໍາ, ການເງິນ, ການຂົນສົ່ງ ແລະ ການຄ້າ, ສະຫນັບສະຫນູນການພັດທະນາອຸດສາຫະກໍາຕ່າງໆ ເຊັ່ນ: ອະສັງຫາລິມະຊັບ, ການຄ້າ, ສື່ມວນຊົນ ແລະ ອື່ນໆ, ເພື່ອແນໃສ່ການພັດພັດທະນາ ຂສພຄ ໃຫ້ກາຍເປັນເມືອງທີ່ມີສູນລວມການທ່ອງທ່ຽວຄົບວົງຈອນດ້ານການທ່ອງທ່ຽວ, ການຄ້າຂາຍມີຄວາມສະດວກສະບາຍ ແລະ ເປັນເມືອງທີ່ໜ້າຢູ່ໜ້າມາທ່ຽວຊົມ.

ການສ້າງຕັ້ງ ແລະ ດໍາເນີນການພັດທະນາເຂດເສດຖະກິດພິເສດ ຢູ່ ສປປ ລາວ ໃນໄລຍະທີ່ຜ່ານມາ ແລະ ໃນປັດຈຸບັນໄດ້ມີການພັດທະນາໃນລະດັບທີ່ດີ ແລະ ພົ້ນເດັ່ນຫຼາຍດ້ານ.  ຊຶ່ງເປັນໄປຕາມແຜນແມ່ບົດການພັດທະນາ ເປັນຕົ້ນແມ່ນພັດທະນາເຂດເສດຖະກິດພິເສດໂດຍລັດຖະບານ, ການພັດທະນາຂອງເອກະຊົນ ຫຼື ການພັດທະນາລະຫວ່າງພາກລັດ ແລະ ພາກເອກະຊົນລົງທຶນພັດທະນາຮ່ວມກັນ.

**ເອກະສານອ້າງອີງ**


1. ດໍາລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຢູ່ ສປປລາວ ແຕ່ປີ 20211 ຮອດປີ 2020, ໜ້າທີ 8.